ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------------------

ກະຊວງການເງິນ ເລກທີ 2736 /ກງ

ວຽງຈັນ, ວັນທີ 26 DEC 2002

# ຄໍາສັ່ງແນະນໍາ

ກ່ຽວກັບການຈັດຕັ້ງ ປະຕິບັດດໍາລັດເລກທີ 54/ ນຍ

ວ່າດ້ວຍ ລະບອບການຄຸ້ມຄອງວິສາຫະກິດທີ່ລັດມີການລົງທຶນ

-------------------------

- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ເລກທີ 54 /ນຍ ລົງວັນທີ 9/5/02 ວ່າດ້ວຍລະບອບການຄຸ້ມຄອງວິສາຫະກິດທີ່ລັດມີການລົງທຶນ.

ເພື່ອສາມາດຄຸ້ມຄອງໄດ້ ບັນດາວິສາຫະກິດທີ່ລັດມີການລົງທຶນ ໃຫ້ເຄື່ອນໄຫວຕາມພາລະບົດບາດ ທີ່ລັດມອບຫມາຍໃຫ້ ; ສັງລວມໄດ້ຊັບສົມບັດ, ທຶນຮອນຂອງລັດ. ປະສິດທິຜົນ, ສະພາບການເຄື່ອນໄຫວ, ຮັບປະກັນແຫລ່ງລາຍຮັບທີ່ສໍາຄັນໃຫ້ງົບປະມານ ແລະເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດບັນດາລະບຽບຫລັກການຄຸ້ມຄອງບັນດາວິສາຫະກິດທີ່ລັດມີການລົງທຶນ.

ລັດຖະມົນຕີວ່າການກະຊວງການເງິນ ອອກຄໍາສັ່ງແນະນໍາ ຄືດັ່ງລຸ່ມນີ້ :

## I. <u>ຈຸດປະສົງ ລະດັບຄາດຫມາຍ</u>

1. <u>ຈຸດປະສົງ</u>

ຄໍາສັ່ງແນະນໍາສະບັບນີ້ ວາງອອກເພື່ອ ກໍານົດລະບຽບການ, ຫລັກການກ່ຽວກັບສ້າງຕັ້ງວິສາຫະກິດທີ່ລັດມີການລົງທຶນ; ເພື່ອເປົ້າຫມາຍປະຕິບັດ ແຜນນະໂຍບາຍຂອງພັກ-ລັດ ທີ່ວາງອອກແຕ່ລະໄລຍະ ຮັບປະກັນປະສິດທິຜົນ , ຮັບໃຊ້ສັງຄົມ ແລະເພື່ອເປັນແຫ່ລງລາຍຮັບທີ່ສໍາຄັນ ໃຫ້ແກ່ງົບປະມານ ເປັນສ່ວນປະກອບທີ່ສໍາຄັນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ.

2. <u>ລະດັບຄາດຫມາຍ</u>

ເພື່ອສາມາດຄຸ້ມຄອງ, ຕິດຕາມ, ກວດກາໄດ້ການເຄື່ອນໄຫວ ທຸລະກິດ, ກໍານົດໄດ້ທຶນ ແລະຈໍານວນວິສາຫະກິດທີ່ລັດມີການລົງທຶນ; ເພື່ອໃຫ້ທຸກລັດວິສາຫະກິດທີ່ລັດມີການລົງທຶນ ຖືກຄວບຄຸມໂດຍສະພາບໍລິຫານ ແລະບໍລິຫານວຽກງານຂອງຕົນຢ່າງມີລະບົບພາຍໃຕ້ລະບຽບກົດຫມາຍແລະເປັນເອກະພາບກ່ຽວກັບລະບົບລາຍງານ

## II. <u>ການສ້າງຕັ້ງແລະຫຍຸບເລີກວິສາຫະກິດທີ່ລັດມີການລົງທຶນ</u>

1. ວິສາຫະກິດ ທີ່ລັດມີການລົງທຶນ ແຫ່ງໃຫມ່ ບໍ່ວ່າຢູ່ຂັ້ນການຄຸ້ມຄອງໃດ ກໍຕາມຈະສາມາດຖືກສ້າງຂຶ້ນໄດ້ ຫລືຈະຖືກຫຍຸບເລີກໄດ້ກໍຕໍ່ເມື່ອໄດ້ຮັບການອະນຸມັດ ຢ່າງເປັນທາງການຈາກ ລັດຖະມົນຕີວ່າການກະຊວງການ

ເງິນຕ່າງໜ້າໃຫ້ລັດຖະບານ ໃນຖານະທີ່ເປັນເຈົ້າຂອງທຶນ ຂອງວິສາຫະກິດທີ່ລັດມີການລົງທຶນ.

ບັນດາກະຊວງອ້ອມຂ້າງສູນກາງ, ອົງການທຽບເທົ່າ, ພະແນກການຕ່າງໆຢູ່ໃນບັນດາແຂວງ, ກຳແພງນະຄອນແລະເຂດພິເສດ ຫາກມີຈຸດປະສົງຢາກສ້າງຕັ້ງ ວິສາຫະກິດທີ່ລັດມີການລົງທຶນຂອງ ຕົນຂຶ້ນໃຫ້ນຳສະເຫນີລວມສູນທີ່ກະຊວງການເງິນບົນພື້ນຖານການສຶກສາ ຄົ້ນຄວ້າບົດວິພາກເສດຖະກິດ, ໄລ່ລຽງປະສິດທິຜົນ, ສຶກສາດ້ານທຶນ, ບຸກຄະລາ ກອນທີ່ມີຄວາມສາມາດທີ່ຈະເຂົ້າມາບໍລິຫານແລະຄວາມອາດ ສາມາດຕົວຈິງຂອງງົບປະມານເພື່ອປະກອບທຶນ ເຂົ້າໃສ່ກິດຈະການດັ່ງກ່າວ ເພື່ອຈະໄດ້ນຳສະເຫນີຕໍ່ຂໍອະນຸມັດຈາກລັດຖະບານ.

2. ວິສາຫະກິດທີ່ລັດມີການລົງທຶນ ຈະຖືກອະນຸມັດການຫຍຸບເລີກຈາກກະຊວງການເງິນໄດ້ ກໍ ບົນພື້ນຖານການນຳສະເຫນີ ຢ່າງ ເປັນລາຍລັກອັກສອນ ໂດຍລະບຸເຫດຜົນທີ່ພຽງພໍ ແລະຕ້ອງຜ່ານການກວດກາຄືນຊັບສິນຫນີ້ສິນ ທັງໝົດຂອງວິສາຫະກິດ ແລະຜ່ານການສຶກສາຄົ້ນຄວ້າສາຍເຫດ ທີ່ສະເຫນີຂໍຫຍຸບນັ້ນເສັຽກ່ອນ

3. ບໍ່ອະນຸຍາດໃຫ້ວິສາຫະກິດ ທີ່ລັດມີການລົງທຶນ ໃຫ້ເອກະຊົນສວຍໃຊ້ ຫລືນຳໃຊ້ ຊື່ຂອງວິສາຫະກິດແລະຫ້າມການມອບຊັບສິນບັດຂອງລັດໃຫ້ບຸກຄົນ ແລະພາກສ່ວນອື່ນ ໂດຍທີ່ຍັງບໍ່ໄດ້ຜ່ານການເຫັນດີ ຈາກສະພາບໍລິຫານແລະກະຊວງການເງິນເສັຽກ່ອນ ແລະ ຫ້າມວິສາຫະກິດຂອງລັດ 100% ຈະບໍ່ຖືກອະນຸຍາດເຂົ້າຮ່ວມທຸລະກິດ ທີ່ບໍ່ພົວພັນກັບທຸລະກິດຂອງຕົນ.

## III. ການຄຸ້ມຄອງວິສາຫະກິດທີ່ລັດມີການລົງທຶນ

ກ. <u>ວ່າດ້ວຍສະພາບໍລິຫານ</u> :

1. ທຸກວິສາຫະກິດທີ່ລັດມີການລົງທຶນ ຕ້ອງດຳເນີນທຸລະກິດຂອງຕົນ ພາຍໃຕ້ການ ຄຸ້ມຄອງຂອງສະພາບໍລິຫານແລະໃນຄະນະກຳມະການສະພາບໍລິຫານແຕ່ລະບ່ອນຕ້ອງມີຕາງຫນ້າ ກະຊວງການເງິນເຂົ້າຮ່ວມເປັນຄະນະກຳມະການສະພາບໍລິຫານ.

ສະພາບໍລິຫານເປັນອົງການທີ່ມີອຳນາດສູງສຸດ ສຳລັບວິສາຫະກິດທີ່ລັດຖືຮຸ້ນຢູ່ນຳ ໃນການຕັດສິນບັນຫາແລະ ນອກຈາກຈະເຄື່ອນໄຫວໄປຕາມ ສັນຍາທີ່ໄດ້ເຊັ່ນຮ່ວມກັນແລ້ວ ກໍຍັງຕ້ອງໄດ້ເຄື່ອນໄຫວຕາມກົດລະບຽບ ຂອງວິສາຫະກິດນຳອີກ.

ວິສາຫະກິດທີ່ລັດຖືຮຸ້ນຢູ່ນຳ ນອກຈາກສະພາບໍລິຫານແລ້ວ ກໍສາມາດສະເຫນີສ້າງຕັ້ງສະພາຂາຮຸ້ນນຳອີກ ຫລືຄະນະກຳມະການສະພາບໍລິຫານຈະເປັນຄົນ ໆ ດຽວກັບສະພາຂາຮຸ້ນກໍ່ໄດ້ ແຕ່ໃຫ້ແຍກເປົ້າຫມາຍການປະຊຸມແຕ່ລະຄັ້ງໃຫ້ຈະແຈ້ງ ວ່າກອງປະຊຸມໃດແມ່ນກອງປະຊຸມສະພາບໍລິຫານ ແລະກອງປະຊຸມໃດເປັນກອງປະຊຸມຂາຮຸ້ນ ຊຶ່ງຕ້ອງມີບົດບັນທຶກກອງປະຊຸມແຕ່ລະປະເພດການປະຊຸມໃຫ້ຈະແຈ້ງ.

2. ບັນດາຄະນະກຳມະການ ທີ່ເປັນຜູ້ຕາງໜ້າໃຫ້ລັດ ຢູ່ໃນສະພາບໍລິຫານ ບໍ່ຈຳເປັນຕ້ອງແມ່ນພະນັກງານຈາກອົງການຈັດຕັ້ງຂອງ ລັດສະເຫມີໄປ , ສາມາດມາຈາກພາຍນອກກໍ່ໄດ້ ເຊັ່ນ: ພະນັກງານບຳນານ, ນັກທຸລະກິດທີ່ມີປະສົບການສູງ ຫລືຊ່ຽວຊານຄົນລາວທີ່ມີ ບົດຮຽນ ແຕ່ທັງຫມົດແມ່ນບົນພື້ນຖານການ ອະນຸມັດ ຂອງລັດຖະມົນຕີວ່າການກະຊວງການເງິນ ແລະ ກະຊວງກ່ຽວຂ້ອງເສັຽກ່ອນ.

ລັດວິສາຫະກິດ 100% ສາມາດແຕ່ງຕັ້ງຜູ້ຕາງຫນ້າ ຂອງຕົນເຂົ້າຮ່ວມເປັນຄະນະກຳມະການສະພາ ບໍລິຫານ ໃນວິສາຫະກິດປະສົມ ຫລືຮ່ວມທຶນໃດຫນຶ່ງໄດ້ຖ້າຫາກວິສາຫະກິດປະສົມ ຫລືຮ່ວມທຶນດັ່ງກ່າວ ຫາກເປັນວິສາຫະກິດທີ່ຕົນໄດ້ຮັບການອະນຸມັດໃຫ້ເຂົ້າຮ່ວມທຸລະກິດຢູ່ນຳ.

3. ຄະນະກຳມະການສະພາບໍລິຫານ ສາມາດດຳລົງຕຳແຫນ່ງຂອງຕົນໄດ້ຢູ່ໃນຫລາຍວິສາຫະກິດ ແຕ່ບໍ່ໃຫ້ ເກີນ 3 ແຫ່ງ ແລະບໍ່ແມ່ນທຸລະກິດປະເພດດຽວກັບ ວິສາຫະກິດອື່ນທີ່ຕົນເປັນ ສະພາບໍລິຫານຢູ່ແລ້ວ

ໃນຊ່ວງໄລຍະ 3 ປີ ຖ້າຫາກມີຕຳແຫນ່ງຫ່ວາງເປົ່າ ຂອງກຳມະການສະພາບໍລິຫານ ຜູ້ຫນຶ່ງ ຫລື ຫລາຍຄົນ ດ້ວຍເຫດຜົນໃດກໍ່ຕາມ ສະພາບໍລິຫານຫລື ກອງປະຊຸມຂາຮຸ້ນຕ້ອງນຳສະເຫນີຫາລັດຖະມົນຕີ ກະຊວງການເງິນ ເພື່ອອະນຸມັດ ການປ່ຽນແທນດັ່ງກ່າວ.

ຖ້າຈຳນວນກຳມະການ ສະພາບໍລິຫານ ຫາກຕ່ຳກວ່າ 3 ຄົນ ຈະຕ້ອງໄດ້ຮຽກປະຊຸມສະພາບໍລິຫານຫລື ກອງປະຊຸມໃຫຍ່ຂາຫຸ້ນ ສະໄຫມວິສາມັນ ເພື່ອນຳສະເຫນີ ລັດຖະມົນຕີວ່າການ ກະຊວງການເງິນ ກ່ຽວກັບ ການແຕ່ງຕັ້ງກຳມະການສະພາບໍລິຫານ ແທນຕຳແຫນ່ງທີ່ ຫວ່າງເປົ່ານັ້ນ.

ຜູ້ທີ່ຖືກ ແຕ່ງຕັ້ງ ໃນຕຳແຫນ່ງຫວ່າງເປົ່າ ນັ້ນຈະດຳເນີນພາລະບົດບາດ ຂອງຕົນໄດ້ແຕ່ໃນຊ່ວງໄລຍະເວ ລາ ທີ່ຍັງເຫລືອເທົ່ານັ້ນ ໄປຈົນຮອດການແຕ່ງຕັ້ງສະພາບໍລິຫານເທື່ອໃຫມ່.

4. ກຳມະການສະພາບໍລິຫານອາດປົດຈາກຫນ້າທີ່ ເປັນສະເພາະບຸກຄົນ ຫລືເປັນຫມູ່ຄະນະກໍໄດ້ທຸກເວລາ ຕາມຮູບການດຽວກັນກັບການແຕ່ງຕັ້ງສະພາບໍລິຫານ ຖ້າຫາກສາມາດຢັ້ງຢືນໄດ້ວ່າມີສ່ວນຮ່ວມໃນການ ເຮັດໃຫ້ທຸລະກິດຫລົ່ມຈົ່ມ ເຊັ່ນ:

- ການລະເມີດຕໍ່ ຂໍ້ກຳນົດ ທາງດ້ານນິຕິກຳ ຫລືລະບຽບການ ທີ່ນຳໃຊ້ຕໍ່ວິສາຫະກິດທີ່ລັດມີ ການລົງທຶນ
- ການລະເມີດກົດລະບຽບ ຂອງວິສາຫະກິດທີ່ລັດມີການລົງທຶນ.
- ຂໍ້ຜິດພາດ ທາງດ້ານການຄຸ້ມຄອງ ແລະບໍລິຫານ ຊຶ່ງເປັນການກະທຳ ທີ່ຂັດກັບສິດຜົນປະໂຫຍດ ຂອງວິສາຫະກິດ ນອກຈາກມາດຕະການ ປົດອອກຈາກຕຳແຫນ່ງແລ້ວ ກໍ່ຍັງມີມາດຕະການທີ່ບົ່ງໄວ້ໃນ ກົດຫມາຍແພ່ງ ແລະ ກົດຫມາຍອາຍາ.

ສຳລັບລັດວິສາຫະກິດ 100% ກຳມະການສະພາບໍລິຫານ ຈະຖືກປົດໂດຍລັດຖະມົນຕີກະຊວງການ ເງິນ, ບົນພື້ນຖານຄວາມຜິດທີ່ລະບຸໄວ້ຂ້າງເທິງນີ້;

ສ່ວນວິສາຫະກິດປະສົມຫລືຮ່ວມທຶນ ກຳມະການ ສະພາບໍລິຫານ ຈະຖືກປົດອອກຈາກຫນ້າທີ່ ໂດຍກອງປະຊຸມໄຫຍ່ຂາຮຸ້ນ ດ້ວຍຄະແນນສຽງທີ່ກວມ ເອົາສອງສ່ວນສາມ ຂອງຈຳນວນຮຸ້ນທັງຫມົດ.

5. ສະພາບໍລິຫານຂອງລັດວິສາຫະກິດ 100% ເປັນຜູ້ກຳນົດເງິນເດືອນຂອງຄະນະອຳນວຍການ ເພື່ອນຳສະ ເຫນີລັດຖະມົນຕີກະຊວງການເງິນອະນຸມັດ.

ສຳລັບວິສາຫະກິດປະສົມຫລືຮ່ວມທຶນ ພາຍຫລັງທີ່ສະພາບໍລິຫານພິຈາລະນາກ່ຽວກັບເງິນເດືອນຂອງ ຄະນະອຳນວຍການແລ້ວ, ກໍຕ້ອງໄດ້ລາຍງານໃຫ້ກະຊວງການເງິນເພື່ອຊາບ.

6. ສະພາບໍລິຫານ ສາມາດແຕ່ງຕັ້ງ ເລຂານຸການຜູ້ຫນຶ່ງຂຶ້ນ. ເລຂານຸການດັ່ງກ່າວ ບໍ່ຈຳເປັນຕ້ອງແມ່ນກຳ ມະການສະພາບໍລິຫານ ຫລື ຂາຮຸ້ນ.

ຂ. <u>ວ່າດ້ວຍອຳນວຍການ</u>

ຜູ້ອຳນວຍການ ລັດວິສາຫະກິດທີ່ລັດມີການລົງທຶນ ສາມາດເປັນກຳມະການສະພາບໍລິຫານຂອງລັດວິສາຫະກິດທີ່ຜູ້ກ່ຽວດຳລົງຕຳແໜ່ງຢູ່.

ຜູ້ອຳນວຍການວິສາຫະກິດທີ່ລັດມີການລົງທຶນສາມາດ ຖືກປົດອອກຈາກຕຳແໜ່ງໄດ້ທຸກເວລາ ໂດຍລັດຖະມົນຕີກະຊວງການເງິນ ບົນພື້ນຖານການສະເໜີຂອງສະພາບໍລິຫານ ຫລືສະພາຂາຮຸ້ນ ຖ້າຫາກ ມີຜົນງານບໍ່ດີ ບໍ່ມີຄວາມສາມາດຄຸ້ມຄອງແລະບໍລິຫານທຸລະກິດໃຫ້ຂະຫຍາຍຕົວໄດ້, ຂາດຄວາມໂປ່ງໃສ ເຮັດໃຫ້ທຶນຮອນຂອງລັດກຸດຫ້ຽນ ຫລືເຮັດໃຫ້ທຸລະກິດລົ້ມຈົມ

ຜູ້ອຳນວຍການຂອງລັດວິສາຫະກິດ 100% ທີ່ດຳເນີນທຸລະກິດທີ່ບໍ່ມີລັກສະນະຍຸດທະສາດ ບໍ່ແມ່ນເພື່ອຮັບໃຊ້ໜ້າທີ່ການເມືອງ ຈະຖືກພິຈາລະນາ ປົດຕຳແໜ່ງ ກໍລະນີຫາກເຮັດໃຫ້ວິສາຫະກິດທີ່ລັດລົງທຶນນັ້ນ ມີການຫລຸບທຶນເຖິງ 2 ປີໂດຍບໍ່ມີເຫດຜົນ ພ້ອມທັງຈະຖືກປະຕິບັດວິໃນ ແລະມາດຕະການຄວາມຜິດ ຕາມກົດໝາຍແພ່ງ ຫລື ອາຍາ ແລ້ວແຕ່ກໍລະນີຂອງການກະທຳຜິດ.

ຄ. <u>ວ່າດ້ວຍກົດລະບຽບ</u> :

ບັນດາກົດລະບຽບຂອງວິສາຫະກິດທີ່ລັດມີການລົງທຶນຕ້ອງໄດ້ຮ່າງຂຶ້ນເປັນລາຍລັກອັກສອນແລະເຊັນໂດຍຜູ້ອຳນວຍການບົນພື້ນຖານຄວາມເປັນເອກະພາບ ພາຍໃນຄະນະບໍລິຫານຂອງ ວິສາຫະກິດ, ຈາກນັ້ນໃຫ້ນຳສົ່ງກະຊວງການເງິນ ເພື່ອຕິດຕາມການຈັດຕັ້ງປະຕິບັດ ກົດລະບຽບດັ່ງກ່າວ.

ມະຕິຕົກລົງວ່າດ້ວຍການປ່ຽນແປງຖານະທາງດ້ານກົດໝາຍຂອງວິສາຫະກິດ ຊຶ່ງເປັນກຳມະສິດຂອງລັດ 100% ແມ່ນກະຊວງການເງິນເປັນຜູ້ຕົກລົງ.

ງ. <u>ວ່າດ້ວຍເບັ້ຍປະຊຸມ, ເງິນບຳເນັດຂອງສະພາບໍລິຫານ ແລະ ເງິນເດືອນຂອງຜູ້ອຳນວຍການ</u>

1. ວິສາຫະກິດທີ່ລັດມີການລົງທຶນຕ້ອງຈ່າຍເງິນນະໂຍບາຍຮ່ວມປະຊຸມ ຫລື ເບັ້ຍປະຊຸມໃຫ້ກຳມະການສະພາບໍລິຫານແລະຖ້າຫາກກອງປະຊຸມສະພາບໍລິຫານຫາກບໍ່ແມ່ນກອງປະຊຸມດຽວກັນກັບກອງປະຊຸມຂາຮຸ້ນ ເງິນນະໂຍບາຍ ດັ່ງກ່າວກໍສາມາດຈ່າຍໃຫ້ແກ່ກອງປະຊຸມດັ່ງກ່າວໄດ້ອີກ ເພື່ອເປັນຄ່າໄຊ້ຈ່າຍໃນການປະຕິບັດໜ້າທີ່ວຽກງານຂອງເຂົາເຈົ້າ.

2. ກຳມະການສະພາບໍລິຫານຈະໄດ້ຮັບເງິນບຳເນັດ ຊຶ່ງເປັນເງິນຍ້ອງຍໍຜົນ ງານສະເພາະ ຂອງກຳມະການສະພາບໍລິຫານແຕ່ລະຄົນ ບົນພື້ນຖານການປະກອບສ່ວນ ແລະການມີໜ້າເຂົ້າຮ່ວມກອງປະຊຸມສະພາບໍລິຫານ ຕາມເງື່ອນໄຂດັ່ງລຸ່ມນີ້:

ວິສາຫະກິດທີ່ລັດມີການລົງທຶນຈະສາມາດເບີກຈ່າຍເງິນບຳເນັດໃຫ້ພະນັກງານ ກຳມະກອນ ແລະ ກຳມະ

ການສະພາບໍລິຫານ ຂອງຕົນໄດ້ຕາມລະບຽບການທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງດຳລັດເລກທີ່ 54/ນຍ ລົງວັນທີ 9/05/02 ໄດ້ກໍ່ຕໍ່ເມື່ອຫາກສາມາດປະຕິບັດໄດ້ຕາມແຜນລາຍຮັບ ຫລື ເກີນແຜນການທີ່ໄດ້ຂຶ້ນໄວ້.

ການແບ່ງປັນຈຳນວນເງິນບຳເນັດ ແລະການຈ່າຍເບັ້ຽປະຊຸມໃຫ້ກຳມະການສະພາບໍລິຫານນັ້ນ ແມ່ນສະພາບໍລິຫານ ເປັນຜູ້ຕົກລົງໂດຍໃຫ້ເອົາເງິນເດືອນທີ່ໄດ້ຜ່ານການອະນຸມັດຈາກກະຊວງການເງິນແລ້ວນັ້ນເປັນພື້ນຖານ ໃນການຄິດໄລ່ເບັ້ຽປະຊຸມ ແລະເງິນບຳເນັດປະຈຳປີ ຂອງກຳມະການສະພາບໍລິຫານ, ການຈັດຕັ້ງປະຕິບັດກ່ຽວກັບການເບີກຈ່າຍບໍ່ຈຳເປັນຕ້ອງຂໍອະນຸມັດຈາກກະຊວງການເງິນອີກ.

ຜູ້ອຳນວຍການທີ່ເປັນກກຳມະການສະພາບໍລິຫານ ຈະໄດ້ຮັບແຕ່ເງິນບຳເນັດປະຈຳປີ ໃນນາມເປັນຜູ້ອຳນວຍການເທົ່ານັ້ນ ແລະຈະບໍ່ໄດ້ຮັບໃນນາມກຳມະການສະພາບໍລິການຕື່ມອີກ.

3. ບໍ່ອະນຸຍາດ ກຳມະການສະພາບໍລິຫານຜູ້ໃດ ກູ້ຢືມເງິນ ຈາກວິສາຫະກິດທີ່ລັດມີການລົງທຶນຈະແມ່ນຢູ່ໃນຮູບການໃດກໍ່ຕາມ ຫລືຂໍໃຫ້ວິສາຫະກິດ ຂອງລັດຄ້ຳປະກັນການຊຳລະເງິນ ຫລື ໃບຢັ້ງຢືນການຄ້າ ຊຶ່ງຕົນໄດ້ມີຂໍ້ຕົກລົງໄວ້ກັບພາກສ່ວນອື່ນ.

4. ບັນດາບຸກຄົນທີ່ມີສ່ວນກ່ຽວຂ້ອງທີ່ຖືກເຊີນ ເຂົ້າຮ່ວມກອງປະຊຸມສະພາບໍລິຫານລວມທັງເລຂາກອງປະຊຸມກໍສາມາດໄດ້ຮັບເງິນເບັ້ຽປະຊຸມ ໃນອັດຕາສ່ວນ 80% ຂອງເງິນເບັ້ຽປະຊຸມທີ່ກຳມະການສະພາບໍລິຫານໄດ້ຮັບ ເພື່ອເປັນຄ່າທົດແທນລາຍຈ່າຍສິ້ນເປືອງໃນການມາເຂົ້າຮ່ວມກອງປະຊຸມສະພາບໍລິຫານ. ນອກຈາກນີ້ບຸກຄົນດັ່ງກ່າວກໍ່ສາມາດຮັບຄ່າທົດແທນວຽກງານຕົວຈິງໃດຫນຶ່ງໄດ້ຖ້າສະພາບໍລິຫານຂໍຮ້ອງໃຫ້ຜູ້ກ່ຽວເຮັດ ແລະໃນກໍລະນີນີ້ຕ້ອງມີສັນຍາຜູກພັນຕ່າງຫາກ ລະຫວ່າງ ວິສາຫະກິດ ແລະ ບຸກຄົນທີ່ກ່ຽວຂ້ອງ

5. ກຳມະການສະພາບໍລິຫານມີສິດໄດ້ຮັບເບັ້ຽປະຊຸມ ໃນແຕ່ລະຄັ້ງທີ່ເຂົ້າຮ່ວມກອງປະຊຸມສະໄຫມສາມັນ ຕາມອັດຕາເບັ້ຽປະຊຸມຫມົດປີ ຫານໃຫ້ ຈຳນວນເທື່ອຂອງກອງປະຊຸມສະໄຫມສາມັນ ທີ່ໄດ້ກຳນົດໄວ້ຫມົດປີ ເຊັ່ນຕົວຢ່າງ:
   - ເງິນເດືອນຜູ້ອຳນວຍການ ເທົ່າກັບ 500.000 ກີບ/ເດືອນ ( ມູນຄ່າຍັງບໍ່ທັນໄດ້ຫັກພັນທະຕ່າງ ໆອອກ )
   - ການຄິດໄລ່ເບັ້ຽປະຊຸມໃຫ້ປະທານສະພາບໍລິຫານ ເທົ່າກັບ ເງິນເດືອນລວມທັງຫມົດຂອງອຳນວຍການ 4 ເດືອນ, ຕົວຢ່າງ ການຄິດໄລ່ມີຄືດັ່ງນີ້:

$$\text{ເບັ້ຽປະຊຸມທີ່ຕ້ອງຈ່າຍຕໍ່ກອງປະຊຸມ 1 ຄັ້ງ} = \frac{\text{ເບັ້ຽປະຊຸມຫມົດປີ}}{\text{4 ຄັ້ງຕໍ່ປີ}} = \frac{\text{500.000 ກີບ x 4 ເດືອນ}}{4}$$

$$= \text{500.000 ກີບ/ການປະຊຸມ 1 ຄັ້ງ}$$

   - ກໍລະນີການປະຊຸມໃນປີຫາກຫນ້ອຍກວ່າ 4 ເທື່ອ ຕໍ່ປີ ແມ່ນໃຫ້ເອົາເບັ້ຽປະຊຸມ ຕໍ່ 1 ຄັ້ງ ຈ່າຍກ່ອນ. ສ່ວນເຫລືອໃຫ້ຈ່າຍໃນກອງປະຊຸມຄັ້ງສຸດທ້າຍຂອງປີໃຫ້ຄົບຕາມຈຳນວນເບັ້ຽປະຊຸມສູງສຸດຕໍ່ປີ ດັ່ງຕົວຢ່າງການປະຊຸມ 3 ຄັ້ງຕໍ່ປີດັ່ງລຸ່ມນີ້:

ການຈ່າຍເບັ້ຽປະຊຸມ ຄັ້ງທີ 1 = 500.000 ກີບ
ການຈ່າຍເບັ້ຽປະຊຸມ ຄັ້ງທີ 2 = 500.000 ກີບ
ການຈ່າຍເບັ້ຽປະຊຸມ ຄັ້ງທີ 3 = 1.000.000 ກີບ
ລວມ = 2.000.000 ກີບ

- ກໍລະນີການປະຊຸມໃນປີຫາກຫລາຍກວ່າ 4 ຄັ້ງ , ແມ່ນເອົາມູນຄ່າເບັ້ຽປະຊຸມຕໍ່ 1 ຄັ້ງ ຈ່າຍໃນເວລາມີການປະຊຸມແຕ່ລະຄັ້ງ ເຖິງວ່າມູນຄ່າຈະເກີນເບັ້ຽປະຊຸມສູງສຸດຕໍ່ປີກໍ່ຕາມ ເຊັ່ນຕົວຢ່າງການປະຊຸມ 6 ຄັ້ງຕໍ່ປີ:

ການຈ່າຍເບັ້ຽປະຊຸມ ຄັ້ງທີ 1 ຫາ ຄັ້ງທີ 6 ແມ່ນຈ່າຍຄັ້ງລະ = 500.000 ກີບ
ລວມ ເງິນເບັ້ຽປະຊຸມ 6 ຄັ້ງໃນ ປີ ໜຶ່ງ = 3.000.000 ກີບ

- ສໍາລັບເບັ້ຽປະຊຸມສະໄໝມວິສາມັນຖ້າຫາກມີກໍ່ແມ່ນໃຫ້ເບີກຈ່າຍໄດ້ໃນຂອບເຂດດຽວກັນກັບ ກອງປະຊຸມສາມັນແຕ່ລະຄັ້ງ.

6. ກອງປະຊຸມສະພາບໍລິຫານ ສະໄໝສາມັນຕ້ອງເປີດຂຶ້ນຢ່າງໜ້ອຍ 3 ເດືອນໃດເທື່ອໜຶ່ງ ອີງຕາມການຮຽກເຊີນ ຂອງປະທານສະພາບໍລິຫານ ແລະ ຕ້ອງສຶກສາຄົ້ນຄວ້າ ທຸກໆ ບັນຫາທີ່ໄດ້ ແຈ້ງຢູ່ໃນວາລະຂອງກອງປະຊຸມ. ວາລະກອງປະຊຸມຕ້ອງສົ່ງໃຫ້ຄະນະກໍາມະການສະພາບໍລິຫານສຶກສາຄົ້ນຄວ້າກ່ອນການເກີດກອງປະຊຸມຢ່າງໜ້ອຍ 1 ອາທິດ. ການຮຽກປະຊຸມສະໄໝ ວິສາມັນ ຕ້ອງໃຫ້ມີການກໍານົດວາລະປະຊຸມ ຢ່າງຄັກແນ່ຄືກັບກອງປະຊຸມສາມັນ;

7. ຄະນະອໍານວຍການຂອງວິສາຫະກິດທີ່ລັດລົງທຶນ ບໍ່ມີສິດ ຕົກລົງ ບັນຫາທີ່ມີການພົວພັນເຖິງທິດທາງໃຫຍ່ໆ ທາງດ້ານຍຸດທະຍາດ, ເສດຖະກິດ, ການເງິນ ຫລື ທາງດ້ານເຕັກໂນໂລຊີ ຂອງວິສາຫະກິດຂອງລັດ, ບັນດາສັນຍາທີ່ພົວພັນເຖິງວິສາຫະກິດ ຫລືສັນຍາແຜນການ ກັບລັດຖະບານ ຖ້າຫາກບໍ່ທັນໄດ້ຮັບການເຫັນດີຈາກສະພາບໍລິຫານເສຽກ່ອນ.

## IV. <u>ການກໍານົດເງິນກູ້, ໜີ້ສິນ, ເງິນຄໍ້າປະກັນຕ່າງ ໆ</u>

1. ສະພາບໍລິຫານຈະເປັນຜູ້ກໍານົດກ່ຽວກັບເພດານໜີ້ສິນ, ເງິນກູ້, ເງິນຄໍ້າປະກັນຕ່າງ ໆ ລວມທັງການລົງທຶນຂະຫຍາຍການຜະລິດ, ການຮ່ວມປະກອບທຶນ ທີ່ມີຜົນປະໂຫຍດໃຫ້ແກ່ວິສາຫະກິດແລະການເປີດກວ້າງຕະຫລາດ ຂອງວິສາຫະກິດທີ່ລັດມີການລົງທຶນ.

2. ພາຍຫລັງສະພາບໍລິຫານ ກໍານົດຂອບເຂດເງິນກູ້ຢືມສູງສຸດ ຊຶ່ງຜູ້ອໍານວຍການ ຂອງວິສາຫະກິດທີ່ລັດມີການລົງທຶນ ບໍ່ສາມາດກູ້ຢືມເກີນໄດ້ ແຕ່ກໍລະນີຫາກມີຄວາມຈໍາເປັນຕ້ອງໃດ້ມີໜີ້ສິນ, ເງິນກູ້ ແລະເງິນຄໍ້າປະກັນຕ່າງ ໆ ເກີນເພດານ ທີ່ ສະພາບໍລິຫານໄດ້ກໍານົດໄວ້ແລ້ວ ແລະເພື່ອບັນລຸໃດ້ເປົ້າໝາຍຂອງວິສາຫະກິດ ກໍ່ສາມາດ ກູ້ຢືມໃດ້ ແຕ່ຕ້ອງໄດ້ຮັບການອະນຸມັດເປັນພິເສດຈາກສະພາບໍລິຫານເສັຽກ່ອນ.

## V. <u>ວ່າດ້ວຍພັນທະຕໍ່ລັດ</u>

ທຸກວິສາຫະກິດທີ່ລັດມີການລົງທຶນ ມີພັນທະແລະຫນ້າທີ່ ຄືດັ່ງນີ້ :

1. ຜູ້ອຳນວຍການຂອງລັດວິສາຫະກິດຊຶ່ງຖືກແຕ່ງຕັ້ງຈາກລັດຖະມົນຕີກະຊວງການເງິນໃຫ້ເຂົ້າໄປບໍລິຫານແລະຄຸ້ມຄອງການເຄື່ອນໄຫວຂອງທຸລະກິດ ມີຫນ້າທີ່ ປົກປັກຮັກສາຊັບສິນບັດ, ທຶນແລະຄັງສະສົມທັງຫມົດພ້ອມທັງກຳໄລຂອງລັດວິສາຫະກິດໃຫ້ໄດ້ດີ ມີປະສິດທິຜົນ ເນື່ອງຈາກທັງຫມົດນັ້ນ ແມ່ນເປັນທຶນຮອນທີ່ລັດໄດ້ມອບໃຫ້ລັດວິສາຫະກິດ ສະນັ້ນ ສ່ວນເຫລືອ ຈາກການນຳໃຊ້ ແມ່ນລັດເປັນເຈົ້າກຳມະສິດແຕ່ຜູ້ດຽວ ແລະ ລັດສາມາດຮຽກຮ້ອງເຂົ້າງົບປະມານເວລາໃດກໍ່ໄດ້ ຖ້າຫາກມີຄວາມຕ້ອງການນຳໃຊ້.

2. ການແບ່ງປັນຜົນກຳໄລຂອງ ວິສາຫະກິດປະສົມ ແລະ ຮ່ວມທຶນ ນັ້ນ ແມ່ນໃຫ້ປະຕິບັດຕາມອັດຕາສ່ວນຮຸ້ນຂອງແຕ່ລະຝ່າຍ ບົນພື້ນຖານການກວດສອບບັນຊີ ຂອງອົງການກວດສອບບັນຊີພາຍນອກແລ້ວ ແລະ ພາຍຫລັງການຕົກລົງອະນຸມັດກ່ຽວກັບຄັງຂະຫຍາຍການຜະລິດຂອງສະພາບໍລິຫານ.

3. ມີພັນທະຕ້ອງລາຍງານທຸກສະພາບການຕໍ່ກະຊວງການເງິນດັ່ງນີ້:
   - <u>ເອກະສານທີ່ຕ້ອງລາຍງານທຸກ ງວດ 3 ເດືອນ:</u>
     + ໃບດຸ່ນດຽງ
     + ບັນຊີຜົນໄດ້ຮັບ
     + ບັນຊີລະອຽດ ຊັບສົມບັດ
     + ບັນຊີລະອຽດໜີ້ສິນ
     + ສັນຍາກັບພາກສ່ວນອື່ນຖ້າມີ
     + ບົດບັນທຶກກອງປະຊຸມສະພາບໍລິຫານແຕ່ລະຄັ້ງ
     + ສະພາບການອື່ນໆ
   - <u>ເອກະສານທີ່ຕ້ອງລາຍງານປະຈຳປີ:</u>
     + ໃບສະຫລຸບຊັບສົມບັດ
     + ສະຫລຸບ ແລະ ຂຶ້ນແຜນການຂະຫຍາຍການຜະລິດ ແລະການລົງທຶນ
     + ບົດລາຍງານການມອບພັນທະໃຫ້ລັດ
     + ຈຳນວນພົນ ແລະ ວຽກອົງການຈັດຕັ້ງມະຫາຊົນ
     + ບົດບັນທຶກສະພາຂາຮຸ້ນແຕ່ລະປີ
     + ການລາຍງານອື່ນ ໆ

4. ການນຳສົ່ງຂໍ້ມູນຂ່າວສານ ບົດລາຍງານຕ່າງໆທີ່ກຳນົດໄວ້ໃນຫມວດ V ຂໍ້ 3 ຂ້າງເທິງນີ້ ໃຫ້ປະຕິບັດດັ່ງນີ້

ກ. <u>ສຳລັບເອກະສານທີ່ຕ້ອງລາຍງານປັນງວດ 3 ເດືອນ:</u>

- ວິສາຫະກິດທີ່ລັດມີການລົງທຶນ ຕ້ອງສົ່ງເອກະສານຂ້າງເທິງນີ້ໃຫ້ຂະແຫນງຄຸ້ມຄອງຊັບສິນຂອງລັດທີ່ຕົນຂຶ້ນກັບ ບໍ່ກາຍວັນທີ 15 ຂອງເດືອນ ເມສາ, ກໍລະກົດ, ຕຸລາ ແລະມັງກອນຂອງທຸກໆປີ.
- ຫ້ອງການຄຸ້ມຄອງຊັບສິນຂອງລັດຂັ້ນແຂວງສັງລວມຂໍ້ມູນຂ້າງເທິງນີ້ ໃສ່ຕາຕະລາງທີ່ປະກອບໃຫ້ນັ້ນ

ສົ່ງໃຫ້ກະຊວງການເງິນບໍ່ໃຫ້ກາຍວັນທີ 30 ເດືອນ ເມສາ, ກໍລະກົດ, ຕຸລາແລະມັງກອນຂອງທຸກໆປີ.

ຂ. ສໍາລັບເອກະສານທີ່ຕ້ອງລາຍງານເປັນປີ:

- ວິສາຫະກິດທີ່ລັດມີການລົງທຶນຕ້ອງສົ່ງໃຫ້ຂະແໜງຄຸ້ມຄອງຊັບສິນຂອງລັດທີ່ຕົນຂຶ້ນກັບບໍ່ໃຫ້ກາຍວັນທີ 30 ເດືອນ ກຸມພາ ຂອງທຸກໆປີ.
- ຫ້ອງການຄຸ້ມຄອງຊັບສິນຂອງລັດຂັ້ນແຂວງສັງລວມຂໍ້ມູນຂ້າງເທິງນີ້ ໃສ່ຕາຕະລາງທີ່ປະກອບໃຫ້ນັ້ນ ສົ່ງໃຫ້ກະຊວງການເງິນບໍ່ໃຫ້ກາຍວັນທີ 15 ມີນາ ຂອງແຕ່ລະປີ

  ສໍາລັບວິສາຫະກິດທີ່ລັດລົງທຶນທີ່ຂຶ້ນກັບກົມຄຸ້ມຄອງຊັບສິນຂອງລັດກະຊວງການເງິນນັ້ນ ໃຫ້ສົ່ງເອກະສານຕາມກໍານົດເວລາຂ້າງເທິງນີ້ ໃຫ້ກົມຄຸ້ມຄອງຊັບສິນຂອງລັດໂດຍກົງໂລດ.

## VI. ການປະກອບທຶນ ແລະ ການແບ່ງປັນຜົນກໍາໄລ

1. ລັດວິສາຫະກິດ 100% :

ເມື່ອມີຄວາມຈໍາເປັນຕ້ອງໄດ້ປະກອບທຶນເພີ່ມ ຜູ້ອໍານວຍການຕ້ອງນໍາສະເໜີຄວາມຕ້ອງການທຶນເພີ່ມ ດັ່ງກ່າວ ເພື່ອຂະຫຍາຍການຜະລິດຂອງຕົນ ຜ່ານກອງປະຊຸມສະພາບໍລິຫານ ເພື່ອນໍາສະເໜີຂໍອະນຸມັດຈາກກະຊວງການເງິນ ກ່ຽວກັບ ແຫລ່ງທຶນດັ່ງກ່າວຊຶ່ງອາດຈະດ້ວຍຮູບການ:

- ສະເໜີຂໍກູ້ຢືມຈາກທະນາຄານ ພາຍໃນ ຫລືຈາກຕ່າງປະເທດ
- ສະເໜີຂໍກະຊວງການເງິນປະກອບທຶນເພີ່ມ
- ສະເໜີຂາຍໃບຮຸ້ນໃຫ້ພະນັກງານ ກໍາມະກອນ ຫລືຂາຍທົ່ວໄປ

ພາຍຫລັງທີ່ໄດ້ຮັບການອະນຸມັດຈາກກະຊວງການເງິນ ກ່ຽວກັບຮູບການປະກອບທຶນເພີ່ມໃດນຶ່ງຂ້າງເທິງນີ້ແລ້ວ ຂັ້ນຕອນຈັດຕັ້ງປະຕິບັດຕົວຈິງຕ້ອງໄດ້ມີການປະສານສົມທົບກັນລະອຽດລະຫວ່າງກະຊວງການເງິນ, ວິສາຫະກິດກ່ຽວຂ້ອງ ແລະພາກສ່ວນອື່ນ ໆ ທີ່ກ່ຽວຂ້ອງເພື່ອ :

- ສໍາລັບການກູ້ຢືມຈາກທະນາຄານ ຕ້ອງໄດ້ຮັບການອະນຸມັດຈາກກະຊວງການເງິນເສັຽກ່ອນ ບົນພື້ນຖານ ບົດວິພາກຄວາມອາດສາມາດຕົວຈິງໃນການທົດແທນຄືນ.
- ສໍາລັບການປະກອບທຶນເພີ່ມດ້ວຍງົບປະມານຂອງລັດ ຈະເປັນວັດຖຸ ຫລືເປັນເງິນກໍຕາມຕ້ອງໄດ້ເຮັດສັນຍາກູ້ຢືມລະຫວ່າງກະຊວງການເງິນ ກັບລັດວິສາຫະກິດນັ້ນ.
- ສໍາລັບການຂາຍຮຸ້ນ ກໍຕ້ອງໄດ້ຜ່ານການອະນຸມັດຈາກກະຊວງການເງິນ ເຊັ່ນດຽວກັນ
- ສໍາລັບລັດວິສາຫະກິດ ຕ້ອງມອບເງິນປັນຜົນໃຫ້ລັດລວງໜ້າ ເປັນງວດຄື ງວດລະ 3 ເດືອນ, ພາຍຫລັງຫມົດປີ ຈຶ່ງໄລ່ລຽງກັນ,ຖ້າລັດວິສາຫະກິດມອບເກີນໃຫ້ໄປຫັກຕໍ່ໃນປີຕໍ່ໄປ, ຖ້າມອບບໍ່ພໍໃຫ້ລັດວິສາຫະກິດມອບຕື່ມ.

2. ວິສາຫະກິດປະສົມ ຫລື ຮ່ວມທຶນ

ຖ້າລັດຖືຮຸ້ນຫລາຍກວ່າຫ້າສິບສ່ວນຮ້ອຍແຕ່ບໍ່ຮອດຮ້ອຍສ່ວນຮ້ອຍສະພາບໍລິຫານສາມາດລະດົມທຶນຕື່ມໄດ້ ຕາມການເຫັນດີຂອງກອງປະຊຸມໃຫຍ່ຂາຮຸ້ນ ຫລືກະຊວງການເງິນ ດ້ວຍວິທີການຂາຍໃບຮຸ້ນເພີ້ມຕື່ມ, ຖ້າມູນຄ່າຮຸ້ນທີ່ຂາຍຫາກເກີນກວ່າເຄິ່ງຫນຶ່ງຂອງທຶນທັງຫມົດວິສາຫະກິດທີ່ກ່ຽວຂ້ອງບໍ່ແມ່ນ ລັດວິສາຫະກິດອີກ. ແຕ່ເປັນບໍລິສັດ ທີ່ລັດມີການຮ່ວມທຶນປະກອບຢູ່ນໍາ ຊຶ່ງຕ້ອງໄດ້ຄຸ້ມຄອງບົນພື້ນຖານ ກົດຫມາຍ ວ່າດ້ວຍທຸລະກິດ.

ນອກຈາກນັ້ນວິສາຫະກິດທີ່ລັດມີການລົງທຶນສາມາດຊອກຫາແຫລ່ງທຶນອື່ນໆຈາກພາຍນອກເພື່ອ ຕອບສະໜອງຄວາມຕ້ອງການ ການປະກອບທຶນຮັບໃຊ້ການເຄື່ອນໄຫວທຸລະກິດຂອງຕົນໄດ້ ເປັນຕົ້ນ ດ້ວຍການກູ້ຢືມເງິນນຳທະນາຄານ ແລະ ສະຖາບັນການເງິນຕ່າງໆທັງພາຍໃນ ແລະ ຕ່າງປະເທດ ບົນພື້ນຖານ ການເຫັນດີຈາກສະພາບໍລິຫານ ແລະ ລະບຽບກົດໝາຍຂອງ ສປປ ລາວ.

3. ກຳໄລໃນປີຂອງວິສາຫະກິດຂອງລັດ ພາຍຫລັງການເສຍອາກອນຕ່າງໆຕາມລະບຽບການແລ້ວໃຫ້ ຂະແໜງຄຸ້ມຄອງຊັບສິນຂອງລັດແບ່ງປັນຕາມເປົ້າໝາຍຕາມບູລິມະສິດດັ່ງນີ້:

10.1 ແບ່ງໃຫ້ລັດ ໃນນາມເຈົ້າຂອງທຶນຕ່ຳສຸດບໍ່ໃຫ້ຫລຸດ 50%

10.2 ໃຫ້ຄັງສະສົມຕາມລະບຽບການ 5 ຫາ 10% ຈົນກວ່າຈະຄົບ 1/10 ຂອງທຶນຈົດທະບຽນ

10.3 ໃຫ້ການຊຳລະຕົ້ນທຶນເງິນກູ້ພາຍໃນ ແລະ ຕ່າງປະເທດ

10.4 ໃຫ້ຄັງຂະຫຍາຍການຜະລິດ

10.5 ໃຫ້ຄັງສະສົມອື່ນໆ 5%

ຄັງຂະຫຍາຍການຜະລິດຕ້ອງໄດ້ມີການສະຫລຸບ ແລະ ຂຶ້ນແຜນຄວາມຕ້ອງການນຳໃຊ້ເປັນແຕ່ລະປີ ຕາມ ກຳນົດເວລາທີ່ໄດ້ລະບຸໄວ້ໃນໝວດ V ຂໍ້ 4 ຖ້າຫາກຂາດການສະຫລຸບ ແລະຂຶ້ນແຜນກ່ຽວ ກັບຄັງຂະຫຍາຍການຜະລິດ ວິສາຫະກິດດັ່ງກ່າວຈະບໍ່ໄດ້ຮັບການພິຈາລະນາຮັກສາຄັງຕ່າງ ໆດັ່ງກ່າວ ໄວ້ໄດ້ ຈຳນວນເງິນດັ່ງກ່າວ ຈະຖືກເກັບເຂົ້າງົບປະມານທັງໝົດ.

ຄັງຂະຫຍາຍການຜະລິດ ທີ່ໄດ້ຮັບການອະນຸມັດຈາກກະຊວງການເງິນແລ້ວ ແຕ່ຫາກບໍ່ໄດ້ຖືກນຳ ໃຊ້ ຫລືນຳໃຊ້ບໍ່ໝົດ ຫລືບໍ່ມີເອກະສານຢັ້ງຢືນການໃຊ້ຈ່າຍ ຫລືເອກະສານຢັ້ງຢືນເຊື່ອຖືບໍ່ໄດ້ ກໍຈະຖືກເກັບ ຄືນເຂົ້າງົບປະມານແຫ່ງລັດ ເນື່ອງຈາກຄັງດັ່ງກ່າວບໍ່ສາມາດນຳໄປໃຊ້ໃນປີຕໍ່ໄປໄດ້

ຄັງຂະຫຍາຍການຜະລິດຈະຖືກອະນຸມັດພາຍຫລັງການສະຫລຸບບັນຊີ ແລະຈາກກຳໄລທີ່ໄດ້ຜ່ານ ການຄິດໄລ່ເສັຽອາກອນແລ້ວ. ດັ່ງນັ້ນ, ຄັງຂະຫຍາຍການຜະລິດປີນີ້ ແມ່ນຈະໄດ້ເອົາໄປນຳໃຊ້ໃນປີຕໍ່ໄປ.

4. ນອກຈາກຄັງດັ່ງກ່າວຂ້າງເທິງນີ້ແລ້ວ ບໍ່ອະນຸຍາດໃຫ້ເອົາກຳໄລສ້າງຄັງອື່ນໆໄວ້ເຊັ່ນ: ຄັງສະຫວັດ ດີການສັງຄົມ, ຄັງບຳເນັດ. ລາຍຈ່າຍສະຫວັດດີການສັງຄົມ ກໍ່ຄືລາຍຈ່າຍເງິນບຳເນັດແມ່ນນະໂຍບາຍ ທາງດ້ານສັງຄົມຂອງວິສາຫະກິດຂອງລັດຕໍ່ກຳມະການສະພາບໍລິຫານ ຄະນະອຳນວຍການ ແລະພະ ນັກງານກຳມະກອນຂອງຕົນ ຊຶ່ງຕ້ອງສະແດງອອກເປັນລາຍຈ່າຍຕາມເນື້ອໃນຂອງວິສາຫະກິດຂອງ ລັດ ໂດຍສອດຄ່ອງກັບ ຫລັກການການບັນຊີວິສາຫະກິດ.

5. ໃນກໍລະນີທີ່ວິສາຫະກິດຂອງລັດແຫ່ງໃດແຫ່ງໜຶ່ງບໍ່ມີປະສິດທິຜົນ,ການເຄື່ອນໄຫວຫລຸບທຶນ ກະຊວງການ ເງິນຈະເຕືອນໃຫ້ສະພາບໍລິຫານ ຂອງວິສາຫະກິດຂອງລັດ ທີ່ກ່ຽວຂ້ອງນັ້ນຮູ້ ເພື່ອຊອກຫາວິທີແກ້ໄຂ ແລະ ອະທິບາຍສາຍເຫດ ໃຫ້ກະຊວງການເງິນ ເພື່ອມີມາດຕະການໃນການກວດກາຫາສາເຫດ ທີ່ແທ້ ຈິງ.

## VII. ການຈັດຊື້ , ການສະສາງ, ການຍົກຍ້າຍ ແລະການປ່ຽນແທນຊັບສົມບັດ

1. ການຈັດຊື້ຂອງລັດວິສາຫະກິດ ຕ້ອງດຳເນີນຕາມຂັ້ນຕອນຂອງລະບຽບການຈັດຊື້ຂອງລັດທີ່ວາງອອກ ສະບັບເລກທີ 95/ ນຍ ລົງວັນທີ.........

2. ສະພາບໍລິຫານ ຕ້ອງໄດ້ພິຈາລະນາກ່ຽວກັບຄວາມຈຳເປັນທີ່ຕ້ອງໄດ້ຊື້ຊັບສົມບັດ ເຂົ້າມາປະກອບເຂົ້າໃນວິສາຫະກິດຂອງຕົນ ແລະຕ້ອງຄຳນຶງເຖິງຄວາມສາມາດຕົວຈິງຂອງວິສາຫະກິດ ໂດຍມີເປົ້າຫມາຍເພື່ອເລັ່ງໃສ່ການຊື້ເພື່ອຮັບໃຊ້ການທຸລະກິດເປັນຕົ້ນຕໍ ແລະຕ້ອງບໍ່ມີລັກສະນະຟຸມເຟືອຍ, ທັງຮັບປະກັນການຜະລິດໃຫ້ຄ່ອງຕົວ.

3. ວິສາຫະກິດທີ່ລັດມີການລົງທຶນ ຈະສະສາງຊັບສົມບັດໃດນຶ່ງອອກ. ຍົກຍ້າຍ ຫລືສະເຫນີຂໍປ່ຽນແທນ ຕ້ອງໄດ້ສະເຫນີຕາມຂັ້ນຕອນຄືດັ່ງນີ້:

- ສະເຫນີເຖິງຂະແຫນງຄຸ້ມຄອງຊັບສິນຂອງລັດ ຕາມຂັ້ນທີ່ຕົນຂື້ນກັບ.
- ຂະແຫນງຄຸ້ມຄອງຊັບສິນຂອງລັດທີ່ວິສາຫະກິດລັດມີການລົງທຶນຂື້ນກັບ ຈະພິຈາລະນາການສະເຫນີດັ່ງກ່າວ ພ້ອມທັງກວດກາຊັບສົມບັດທີ່ຖືກສະເຫນີຂື້ນມານັ້ນ ຕາມເງື່ອນໄຂ ແລະລະບຽບການສະສາງຊັບສົມບັດຂອງຂະແຫນງຄຸ້ມຄອງຊັບສິນຂອງລັດ, ຖ້າຫາກເຫັນວ່າຖືກຕ້ອງຕາມເງື່ອນໄຂແລ້ວ ຂະແຫນງຄຸ້ມຄອງຊັບສິນຂອງລັດພ້ອມດ້ວຍ ຄະນະກຳມະການທີ່ກ່ຽວຂ້ອງ ລົງຕີລາຄາ ຕາມສະພາບຕົວຈິງຂອງຊັບສົມບັດນັ້ນ.
- ຂະແຫນງຄຸ້ມຄອງຊັບສິນຂອງລັດຈະແຈ້ງການໃຫ້ວິສາຫະກິດທີ່ກ່ຽວຂ້ອງຊາບກ່ຽວກັບ ການຕີລາຄາ , ການກຳນົດຮູບແບບສະສາງ: ປະມູນທົ່ວໄປ ຫລືປະມູນພາຍໃນວິສາຫະກິດເອງ, ການຕົກລົງກ່ຽວກັບເງິນທີ່ຂາຍໄດ້ໃຫ້ນຳໃຊ້ເປັນທຶນຫມູນວຽນ ຫລື ມອບເຂົ້າງົບປະມານດັ່ງນີ້ເປັນຕົ້ນ.
- ຊັບສົມບັດທີ່ຖືກອະນຸມັດໃຫ້ສະສາງອອກແລ້ວ ວິສາຫະກິດທີ່ກ່ຽວຂ້ອງຕ້ອງໄດ້ລຶບລ້າງຊັບສົມບັດດັ່ງອອກຈາກບັນຊີຂອງວິສາຫະກິດຂອງຕົນ, ຖ້າຫາກແມ່ນຊັບສົມບັດປະເພດພາຫະນະ ຕ້ອງລຶບລ້າງປ້າຍວິສາຫະກິດ ແລະໃສ່ປ້າຍອື່ນຕາມເປົ້າຫມາຍນຳໃຊ້ແທນພາຍໃນກຳນົດເວລາ 45 ວັນ ຂະແຫນງຄຸ້ມຄອງຊັບສິນຂອງລັດແຕ່ລະຂັ້ນຈະບໍ່ຮັບຮູ້ການຊື້-ຂາຍຊັບສົມບັດຂອງລັດວິສາຫະກິດທີ່ລັດມີການລົງທຶນທີ່ບໍ່ໄດ້ຜ່ານການຕົກລົງ ຂອງຂະແຫນງຄຸ້ມຄອງຊັບສິນຂອງລັດ ຫລືສະພາບໍລິຫານເສຍກ່ອນ. ວິສາຫະກິດຕ້ອງຮັບຜິດຊອບຕໍ່ການກະທຳທີ່ຜິດຕໍ່ລະບຽບການດັ່ງກ່າວດັ່ງໄດ້ລະບຸໄວ້ໃນຫມວດ VIII ຂໍ້.......

## VIII. ບັນດາມາດຕະການຕໍ່ວິສາຫະກິດທີ່ລັດມີການລົງທຶນ

1. ບັນດາວິສາຫະກິດຂອງລັດ ທີ່ລະເມີດຂໍ້ກຳນົດທີ່ບົ່ງໄວ້ໃນດຳລັດ ແລະ ບົດແນະນຳສະບັບນີ້ຈະຖືກປະຕິບັດມາດ ຕະການຕາມແຕ່ກໍລະນີ:
   - ມອບເງິນປັນຜົນຊັກຊ້າ ຫລື ບໍ່ມາມອບຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນບົດບັນທຶກພາຍຫລັງການໄລ່ລຽງຈະຖືກປັບໄຫມ 5% ຕໍ່ເດືອນຂອງເງິນປັນຜົນທີ່ຄ້າງຊຳລະ.
   - ບໍ່ສົ່ງບົດສະຫລຸບລາຍງານການບັນຊີແຕ່ລະງວດ ຕາມກຳນົດເວລາທີ່ລະບຸໄວ້ໃນມາດຕາ........... ຈະຖືກປັບໄຫມຄັ້ງລະ 500.000 ກີບ ຕໍ່ການເລັ່ງທວງຄັ້ງທີ່ 1, 1.000.000 ກີບ ສຳລັບຄັ້ງ 2 ແລະ 2.000.000 ກີບ ສຳລັບຄັ້ງທີ 3 ແລະ ຖ້າຫາກການເລັ່ງທວງຫາກເກີນ 3 ຄັ້ງແລ້ວ ຜູ້ອຳນວຍການຈະ

ຖືກກ່າວເຕືອນແລະຫາກຍັງສືບຕໍ່ດື້ດຶງຈະຖືກນໍາສະເຫນີໃຫ້ຂັ້ນເທິງພິຈາລະນາ.

- ບໍ່ສະຫລຸບກ່ຽວກັບການນໍາໃຊ້ຄັງຂະຫຍາຍການຜະລິດ ແລະ ບໍ່ນໍາສະເຫນີແຜນການຂະຫຍາຍການຜະລິດ ລັດວິສາຫະກິດດັ່ງກ່າວຈະບໍ່ໄດ້ຮັບພິຈາລະນາແບ່ງປັນເງິນປັນຜົນຫລືກໍາໄລໃນປີຂອງວິສາຫະກິດ ກໍາໄລທັງຫມົດຈະຖືກມອບເຂົ້າງົບປະມານ,ເພາະຖືວ່າວິສາຫະກິດດັ່ງກ່າວບໍ່ມີຈຸດປະສົງຈະຂະຫຍາຍການຜະລິດຂອງຕົນ.
- ການຈັດຊື້, ການສະສາງ, ການຍົກຍ້າຍ ແລະການປ່ຽນແທນຊັບສົມບັດແມ່ນໃຫ້ປະຕິບັດຕາມລະບຽບການຈັດຊື້ແລະລະບຽບການສະສາງ, ຍົກຍ້າຍ ຫລືປ່ຽນແທນຂອງຂະແຫນງການຄຸ້ມຄອງຊັບສິນຂອງລັດທີ່ວາງອອກ, ຖ້າຟ່າຝືນ ວິສາຫະກິດຈະຖືກພິຈາລະນາຄວາມຜິດດັ່ງກ່າວ ດ້ວຍການຖືກ ປັບໄຫມ 10% ຂອງມູນຄ່າຊື້ຕໍ່ເດືອນ ແລະຖ້າຫາກການປ່ຽນແທນຫາກຊັກຊ້າເກີນ 45 ວັນ ຊັບສົມບັດດັ່ງກ່າວ ຈະຖືກຍຶດຄືນເປັນຂອງລັດໂດຍທີ່ວິສາຫະກິດບໍ່ມີການຕໍ່ວ່າແຕ່ຢ່າງໃດ.

## IX. <u>ການຈັດຕັ້ງປະຕິບັດ</u>

ມອບໃຫ້ຂະແຫນງຄຸ້ມຄອງຊັບສິນຂອງລັດແຕ່ລະຂັ້ນ ເປັນຜູ້ຮັບຜິດຊອບຊີ້ນໍາລວມ ໃນຖານະເປັນແທນຂອງລັດ ທີ່ເປັນຜູ້ຖືຮຸ້ນໃນວິສາຫະກິດທີ່ລັດມີການລົງທຶນແລະໃຫ້ເປັນບ່ອນລວມສູນແນະນໍາຈັດຕັ້ງປະຕິບັດ ທຸກ ໆ ວຽກງານການເງິນຂອງທຸກໆວິສາຫະກິດ ທີ່ລັດມີການລົງທຶນໃນຂອບເຂດທົ່ວປະເທດ .ຄວາມຮັບຜິດຊອບດັ່ງກ່າວນີ້ແມ່ນລວມໄປເຖິງການກວດສອບບັນຊີ ແລະການກວດກາທາງດ້ານການເງິນ ເພື່ອແນ່ໃສ່ຢັ້ງຢືນລະດັບກໍາໄລຕົວຈິງທີ່ປະຕິບັດໄດ້ ຊຶ່ງຈະເປັນພື້ນຖານ ໃຫ້ແກ່ການຄິດໄລ່ເງິນປັນຜົນ, ການກໍານົດ ທຶນແລະຮູບແບບບໍລິສັດໃຫ້ແກ່ວິສາຫະກິດ. ບົດແນະນໍາສະບັບນີ້ມີຜົນໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ

<u>ລັດຖະມົນຕີວ່າການກະຊວງການເງິນ</u>

ສຸກັນ ມະຫາລາດ